**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ** ເລກທີ 1414/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 23.12.2020

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະວັນທີ 23 ທັນວາ 2020 ຫາ ວັນທີ 31 ມັງກອນ 2021.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 3 ມີນາ 2017;
- ອີງຕາມ ຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ການລາຍງານການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ ຂອງຄະນະສະເພາະກິດ;
- ອີງຕາມ ການຊີ້ນໍາ ຂອງທ່ານ ນາຍົກລັດຖະມົນຕີ ໃນກອງປະຊຸມຮ່ວມ ກັບ ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນຄັ້ງວັນທີ 22 ທັນວາ 2020.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງຜົນກອງປະຊຸມລະຫວ່າງ ທ່ານ ນາຍົກລັດຖະມົນຕີ ຮ່ວມກັບຄະນະສະເພາະກິດດັ່ງກ່າວ ມາຍັງທ່ານຊາບ ດັ່ງນີ້: **ເນື່ອງຈາກສະພາບການລະບາດຂອງພະຍາດ COVID-19 ກໍາລັງເປັນໄພຄຸກຄາມຕໍ່ໂລກ ແລະ ຕໍ່ປະເທດເຮົາ ຊຶ່ງຍັງບໍ່ມີທ່າອ່ຽງຫຼຸດລົງ ແລະ ບາງປະເທດ ມີການລະບາດຮອບໃໝ່, ສິ່ງທີ່ເປັນອັນຕະລາຍຍິ່ງໄປກວ່ານັ້ນ ໄດ້ຮັບຂໍ້ມູນຈາກນັກວິທະຍາສາດການແພດ ໃນໂລກໃຫ້ຮູ້ວ່າ ພະຍາດ COVID-19 ໄດ້ມີການກາຍພັນເປັນພັນ ທີ່ຮ້າຍແຮງຂຶ້ນກວ່າເກົ່າ**, **ການແຜ່ເຊື້ອ ຈະມີຄວາມໄວຂຶ້ນ ແລະ ສະຫຼັບສັບຊ້ອນ ກວ່າສາຍພັນເດີມ, ການກວດເຫັນຜູ້ຕິດເຊື້ອປັດຈຸບັນນີ້ ສ່ວນຫຼາຍ ບໍ່ມີອາການ ເຊິ່ງເຮັດໃຫ້ການປ້ອງກັນ, ຄວບຄຸມ ຍິ່ງເພີ່ມຄວາມຫຍຸ້ງຍາກສັບສົນ ຂຶ້ນຕື່ມ. ສະນັ້ນ ລັດຖະບານ ຈຶ່ງຮຽກຮ້ອງໃຫ້ພົນລະເມືອງລາວ ແລະ ຜູ້ທີ່ດໍາລົງຊີວິດ ຢູ່ ສປປ ລາວ ຕ້ອງເພີ່ມສະຕິລະວັງຕົວ ໃຫ້ສູງກວ່າເກົ່າ ແລະ ສູງກວ່າ ທີ່ເປັນຢູ່ໃນປັດຈຸບັນ, ຊຶ່ງມາດຕະການສໍາລັບໄລຍະແຕ່ວັນທີ 23 ທັນວາ 2020 ຫາ ວັນທີ 31 ມັງກອນ 2021 ມີດັ່ງນີ້:**

**1. ໃຫ້ສືບຕໍ່ໂຈະການອະນຸມັດຖ້ຽວບິນເໝົາລໍາຈາກປະເທດ/ຂົງເຂດທີ່ມີການລະບາດຂອງພະຍາດ COVID-19 ພາຍໃນ,** ຍົກເວັ້ນຖ້ຽວບິນເພື່ອມະນຸດສະທໍາ ທີ່ມີຄວາມຈໍາເປັນ ແຕ່

ຕ້ອງໄດ້ມີການຄົ້ນຄວ້າລະອຽດຮັດກຸມ ແລະ ກວດກາຢ່າງເຄັ່ງຄັດ ເປັນແຕ່ລະກໍລະນີ. ພ້ອມກັນນີ້, ກໍ່ໃຫ້ກວດກາຜູ້ໂດຍສານຖ້ຽວບິນເໝົາລໍາ ຈາກປະເທດທີ່ບໍ່ມີການລະບາດ ຂອງເຊື້ອພະຍາດ COVID-19 ຢູ່ພາຍໃນ ທີ່ໄດ້ຮັບອະນຸຍາດ, ເດັດຂາດບໍ່ໃຫ້ມີຜູ້ໂດຍສານຜ່ານ (Transit) ຈາກປະເທດທີ່ມີການລະບາດຂອງພະຍາດ COVID-19 ຢູ່ພາຍໃນ ມານໍາຖ້ຽວບິນເໝົາລໍາດັ່ງກ່າວ.

2. ສືບຕໍ່ໂຈະການອອກວິຊາທ່ອງທ່ຽວ ແລະ ຢ້ຽມຢາມ ໃຫ້ແກ່ຄົນຕ່າງປະເທດ. ສໍາລັບນັກການທູດ, ພະນັກງານອົງການຈັດຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ ທີ່ມີຄວາມຈໍາເປັນ ແລະ ຮີບດ່ວນ ສາມາດເຂົ້າມາປະຕິບັດວຽກງານ ຢູ່ສະຖານທູດ, ບັນດາກິດຈະການ ແລະ ໂຄງການຕ່າງໆ ໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ປະຕິບັດຕາມມາດຕະການປ້ອງກັນ ຢ່າງເຂັ້ມງວດ ເປັນຕົ້ນ ຕ້ອງມີໃບຢັ້ງຢືນການກວດເຊື້ອ COVID-19 ດ້ວຍເຄື່ອງ PCR 72 ຊົ່ວໂມງກ່ອນເດີນທາງອອກນອກປະເທດ ໂດຍມອບໃຫ້ສາຍການບິນເປັນຜູ້ກວດກາຕົວຈິງ ແລະ ເມື່ອມາຮອດ ສປປ ລາວ ແລ້ວ ຕ້ອງໄດ້ກວດເຊື້ອ COVID-19 ດ້ວຍເຄື່ອງ PCR ແລະ ກັກຕົວ ຢູ່ສູນ ຫຼື ໂຮງແຮມ ທີ່ລັດຖະບານກໍານົດ ໃຫ້ຄົບ 14 ວັນ.

3. ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ສໍາລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ ແລະ ການຂົນສົ່ງສິນຄ້າ ຍົກເວັ້ນບາງດ່ານປະເພນີ ຫຼື ດ່ານທ້ອງຖິ່ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ລົດຂົນສົ່ງສິນຄ້າ ເຂົ້າ-ອອກ ໄດ້, ແຕ່ຕ້ອງໄດ້ຮັບການສີດຢາຂ້າເຊື້ອພະຍາດຕາມເຕັກນິກຂອງຂະແໜງການກ່ຽວຂ້ອງ ກໍານົດ.

4. ສືບຕໍ່ປິດດ່ານສາກົນສໍາລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນ ພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ມີຄວາມຈໍາເປັນຮີບດ່ວນ ໃນການເດີນທາງເຂົ້າ-ອອກ ສປປ ລາວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ. ສໍາລັບການຂົນສົ່ງສິນຄ້າ ຜ່ານດ່ານສາກົນ ແມ່ນສາມາດເຂົ້າ-ອອກໄດ້ ຕາມປົກກະຕິ;

5. ບໍ່ອະນຸຍາດໃຫ້ຈັດງານຄອນເສີດ, ງານລາຕີສະໂມສອນ ແລະ ງານສະຫຼອງປີໃໝ່ສາກົນ ທີ່ຈັດເປັນງານໃຫຍ່ ໂດຍໃຫ້ສະຫຼອງຢູ່ກັບເຮືອນ ພາຍໃນຄອບຄົວຂອງໃຜລາວ, ລວມທັງການສູດມົນຂ້າມປີ, ຫາກຈະຈັດຕັ້ງການສູດມົນ ກໍໃຫ້ຈັດແບບກະທັດຮັດ ແລະ ຕ້ອງປະຕິບັດຕາມມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ COVID- 19 ທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ. ສໍາລັບງານດອງ ກໍໃຫ້ຈັດແບບກະທັດຮັດ ແລະ ປະຢັດມັດທະຍັດ ຕາມຮີດຄອງປະເພນີອັນດີງາມຂອງລາວເຮົາ.

6. ສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ທຸກຄົນໃຫ້ສັງຄົມ ເຂົ້າໃຈວ່າ ເຖິງແມ່ນວ່າປະເທດເຮົາ ບໍ່ມີການລະບາດ ຂອງພະຍາດ COVID-19 ຢູ່ພາຍໃນ ກໍ່ຕາມ ແຕ່ຢູ່ບາງປະເທດໃກ້ຄຽງ ແລະ ຫຼາຍປະເທດ ໃນໂລກ ຍັງມີການລະບາດຮຸນແຮງ, ຍ້ອນແນວນັ້ນ ໃຫ້ພົນລະເມືອງລາວ ແລະ ທຸກຄົນ ທີ່ອາໄສຢູ່ ສປປ ລາວ ຕ້ອງຍົກສູງສະຕິຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດ COVID-19 ຢ່າງເປັນເຈົ້າການຮ່ວມກັນ.

7. ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ທ້ອງຖິ່ນກ່ຽວຂ້ອງ ເພີ່ມທະວີການຕິດຕາມກວດກາ ການເຂົ້າ-ອອກ ຢູ່ດ່ານ, ລາດຕາເວນ ຕາມຊາຍແດນ

ເພື່ອຮັບປະກັນ ບໍ່ໃຫ້ມີການເຂົ້າ-ອອກແບບຊະຊາຍ ຫຼື ມີການລັກລອບເຂົ້າ-ອອກ ບໍ່ຜ່ານດ່ານຊາຍແດນ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການນຳເຊື້ອພະຍາດເຂົ້າມາແຜ່ລະບາດໃນຊຸມຊົນ.

**8.** ໃຫ້ອົງການປົກຄອງແຕ່ລະຂັ້ນ ສືບຕໍ່ເພີ່ມທະວີບົດບາດການຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ໃນຂອບເຂດທີ່ຕົນຮັບຜິດຊອບ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນຊາບ ຢ່າງເປັນປົກກະຕິ ແລະ ທັນເວລາ.

**9.** ໃຫ້ບຸກຄົນທີ່ເດີນທາງເຂົ້າມາໃນ ສປປ ລາວ ໃສ່ອຸປະກອນຕິດຕາມທາງການແພດ ເພື່ອໃຫ້ສາມາດຕິດຕາມການເຄື່ອນໄຫວຂອງບຸກຄົນດັ່ງກ່າວໄດ້. ໃຫ້ຄະນະສະເພາະກິດ ຄົ້ນຄວ້າລະບຽບການ ແລະ ຄິດໄລ່ຄ່າໃຊ້ຈ່າຍໃນການນຳໃຊ້ອຸປະກອນຕິດຕາມດັ່ງກ່າວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

**10.** ໃຫ້ຄະນະສະເພາະກິດ ປັບປຸງ ແລະ ຟື້ນຟູຄືນບັນດາສະຖານທີ່ຈຳກັດບໍລິເວນ ຢູ່ສູນກາງ ແລະ ຢູ່ແຕ່ລະທ້ອງຖິ່ນ ທີ່ມີແລ້ວ, ພ້ອມກັນນັ້ນ ກໍໃຫ້ເພີ່ມສະຖານທີ່ໃໝ່ ເພື່ອເປັນບ່ອນຈຳກັດບໍລິເວນ ແລະ ປິ່ນປົວຜູ້ຕິດເຊື້ອ ໃນກໍລະນີທີ່ມີຜູ້ເດີນທາງເຂົ້າມາຈາກຕ່າງປະເທດເປັນຈຳນວນຫຼາຍ ໂດຍສະເພາະແຮງງານລາວ ທີ່ຕົກຄ້າງຢູ່ຕ່າງປະເທດ.

**11.** ໃຫ້ຄະນະສະເພາະກິດ ຊີ້ນຳບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພີ່ມທະວີການຕິດຕາມ ກວດກາສະຖານທີ່ຈຳກັດບໍລິເວນ ທີ່ຕິດພັນກັບການປະຕິບັດມາດຕະການທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ. ພ້ອມນີ້, ຕ້ອງກຳນົດມາດຕະການຕໍ່ຜູ້ທີ່ລະເມີດ ຂໍ້ຫ້າມຕ່າງໆຂອງຄະນະສະເພາະກິດແຕ່ລະຂັ້ນ ຢ່າງເຄັ່ງຄັດ.

**12.** ໃຫ້ຄະນະສະເພາະກິດ ຄົ້ນຄວ້າ ແລະ ກຳນົດໃຫ້ລະອຽດ ເງື່ອນໄຂໃນການຊື້ປະກັນໄພ COVID-19 ສຳລັບຄົນຕ່າງປະເທດທີ່ຈະເດີນທາງເຂົ້າມາ ສປປ ລາວ.

**13.** ໃຫ້ຄະນະສະເພາະກິດ ສືບຕໍ່ປະສານກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຕິດຕາມການຄົ້ນຄວ້າວັກຊີນປ້ອງກັນພະຍາດດັ່ງກ່າວ ທີ່ປັດຈຸບັນ ຍັງຢູ່ໃນໄລຍະທົດລອງເພື່ອໃຫ້ໄດ້ມານຳໃຊ້ໃນປະເທດເຮົາ ຄາດຄະເນໃຫ້ໄດ້ນຳໃຊ້ໄວເທົ່າທີ່ຈະໄວໄດ້. ຄະນະສະເພາະກິດ ຕ້ອງໄດ້ສ້າງແຜນ ການຈັດຫາ ແລະ ນຳໃຊ້ຢາວັກຊີນດັ່ງກ່າວ ມາບໍລິການໃຫ້ປະຊາຊົນ ຢ່າງທົ່ວເຖິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ,**

**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

**ດຳລາວັນ ຈັນທະລາວັນ**

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| - ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຈັດຕັ້ງມະຫາຊົນ ບ່ອນລະ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| - ຄະນະ ທສນຍ, ທ່ານລະ | 01 ສະບັບ |
| - ສຳເນົາ | 01 ສະບັບ |